



## ການເຊົ່າໃນເມືອງຊີແອັດເທິລ

# ສິດທິ, ຄວາມຮັບຜິດຊອບ, ຊັບພະຍາກອນ

### ຜູ້ເຊົ່າມີສິດ:

- ຢູ່ອາໄສໃນບ່ອນພັກອາໄສທີ່ປອດໄພ ແລະມີການບຳລຸງຮັກສາທີ່ດີ
- ປາສະຈາກການເລືອກປະຕິບັດ ຫຼືການແກ້ແຄ້ນ
- ໄດ້ຮັບການແຈ້ງບອກຢ່າງເໝາະສົມກ່ອນໃຫ້ການເຂົ້າເຖິງເຮືອນເຊົ່າ
- ປາສະຈາກການຖືກຂັບໄລ່ອອກຈາກເຮືອນເຊົ່າຢ່າງຜິດກົດໝາຍ
- ໄດ້ຮັບການແຈ້ງບອກເປັນລາຍລັກອັກສອນກ່ຽວກັບການປ່ຽນແປງຕໍ່ກັບສັນຍາການເຊົ່າ

### ຜູ້ເຊົ່າມີຄວາມຮັບຜິດຊອບ:

- ຈ່າຍຄ່າເຊົ່າ
- ບໍ່ເຮັດໃຫ້ຊັບສິນເສຍຫາຍ
- ປະຕິບັດຕາມຂໍ້ກຳນົດຂອງສັນຍາການເຊົ່າ
- ໃຫ້ການເຂົ້າເຖິງທີ່ສົມເຫດສົມຜົນແກ່ເຈົ້າຂອງ ແລະຜູ້ຈັດການຊັບສິນ

ຊອກຮູ້ກ່ຽວກັບສິດທິ ແລະຄວາມຮັບຜິດຊອບຂອງທ່ານໃນນາມເປັນຜູ້ເຊົ່າທີ່:

**www.seattle.gov/rentinginseattle**

## ຕິດຕໍ່ຫາພວກເຮົາ

**ເວັບໄຊທ໌**
www.seattle.gov/RRIO

**ໂທລະສັບ**
(206) 684-4110

**TTY**
7-1-1 ຫຼື (206) 233-7156

**ທາງຈົດໝາຍ ຫຼື ດ້ວຍຕົນເອງ**
700 Fifth Avenue, 20th Floor
PO Box 34234
Seattle, WA 98124-1234

## ມີສະບັບແປໃຫ້

Amharic (አማርኛ) • Cambodian/Khmer (ភាសាខ្មែរ) Chinese (中文 ) • Korean (한국어) • Lao/Laotian/ Phaasaa Laao (ພາສາລາວ) • Oromiffa • Russian (русский язык) • Somali/af Soomaali • Spanish (Español) • Tagalog • Thai (ภาษาไทย) • Tigrinya (ትግርኛ) Vietnamese (Tiếng Việt)


City of Seattle
Department of Construction and Inspections


# ຂໍ້ມູນການກວດກາເຮືອນເຊົ່າ




# ການຈົດທະບຽນເຮືອນເຊົ່າ ແລະຄຳສັ່ງການກວດກາ (RRIO)

*ປັບປຸງ ແລະຮັກສາບ່ອນຢູ່ອາໄສທີ່ປອດໄພ ແລະດີຕໍ່ສຸຂະພາບສຳລັບຜູ້ເຊົ່າທຸກຄົນໃນເມືອງຊີແອັດເທິລ*

# ເປັນຫຍັງເຮືອນຂອງຂ້ອຍຈຶ່ງຈຳເປັນຕ້ອງມີການກວດກາ?

ການຮັກສາການມີຢູ່ ແລະຄຸນນະພາບຂອງເຮືອນເຊົ່າ ຊ່ວຍເຮັດໃຫ້ເມືອງຊີແອັດເທິລ ເປັນບ່ອນຢູ່ອາໄສທີ່ດີເລີດ. ໂຄງການ RRIO ຊ່ວຍຮັບປະກັນໃຫ້ເຮືອນເຊົ່າໃນເມືອງຊີແອັດເທິລ ມີຄວາມປອດໄພ ແລະ ຕອບສະໜອງໄດ້ມາດຕະຖານດ້ານການບຳລຸງຮັກສາຂັ້ນພື້ນຖານ. ໂຄງການຖືກສ້າງຂຶ້ນເພື່ອປົກປ້ອງຜູ້ເຊົ່າຈາກການຢູ່ອາໄສຢູ່ໃນເຮືອນເຊົ່າທີ່ບໍ່ໄດ້ຮັບການບຳລຸງຮັກສາເປັນຢ່າງດີ.

**ເພື່ອຮັບປະກັນໃຫ້ເຮືອນຂອງທ່ານໄດ້ຮັບການບຳລຸງຮັກສາຢ່າງປອດໄພ, ການກວດກາອາດຈະຈຳເປັນມີ. ມັນແມ່ນຄວາມຮັບຜິດຊອບຂອງເຈົ້າຂອງ ຫຼືຜູ້ຈັດການຊັບສິນ ໃນການໃຫ້ມີການເຮັດການກວດກາ.**



## ໃຜຈະເຮັດການກວດກາ?

ການກວດກາຈະຖືກເຮັດໂດຍ:

•

•

# ການກວດກາເປັນແບວໃດ?

ການກວດກາ RRIO ແມ່ນການກວດເບິ່ງຄວາມຕ້ອງການດ້ານບ່ອນ ຢູ່ອາໄສຂັ້ນພື້ນຖານຢ່າງລະອຽດ. ຜູ້ກວດກາຈະກວດເບິ່ງສິ່ງຕ່າງໆເຊັ່ນວ່າ:

- ບໍ່ມີຮູ ຫຼືຮອຍຮົ່ວທີ່ເຫັນໄດ້ເທິງຫຼັງຄາ ຫຼືໃນກຳແພງ
- ລະບົບທໍ່ນ້ຳແລະຫ້ອງນ້ຳ ເຊັ່ນວ່າ ອ່າງນ້ຳ ແລະວິດຖ່າຍແມ່ນໃຊ້ການໄດ້
- ປ່ອງຢ້ຽມ ແລະປະຕູທີ່ໃຊ້ງານໄດ້ ແລະປອດໄພແໜ້ນໜາ
- ລະບົບທຳຄວາມຮ້ອນຖືກຕິດຕັ້ງຢ່າງຖາວອນ ແລະໃຊ້ງານໄດ້

ການກວດກາ ບໍ່ ແມ່ນການກວດເບິ່ງສິ່ງຂອງສ່ວນຕົວຂອງທ່ານ, ທ່ານດຳລົງຊີວິດແບວໃດ ຫຼືທ່ານເຮັດຫຍັງແດ່ໃນບ່ອນຢູ່ອາໄສຂອງທ່ານ.

**ທ່ານສາມາດເບິ່ງລາຍການຄົບຖ້ວນຂອງການກວດກາໄດ້ທີ່ www.seattle.gov/RRIO.**

**ຜູ້ກວດກາ RRIO ຈະ:**

•

•

•

**ຜູ້ກວດກາ RRIO ຈະ ບໍ່:**

•

•

•

# ວຽກການກວດກາຈະເປັນແບວໃດ?

### 1 ແຈ້ງການ

ທ່ານຕ້ອງໄດ້ຮັບການແຈ້ງບອກກ່ຽວກັບການກວດກາຢ່າງນ້ອຍສອງວັນລ່ວງໜ້າ ຈາກເຈົ້າຂອງ ຫຼືຜູ້ຈັດການຊັບສິນ.

ທ່ານຄວນວາງແຜນກັບເຈົ້າຂອງ ຫຼືຜູ້ຈັດການຊັບສິນສຳລັບການເຂົ້າມາກວດບ່ອນຢູ່ຂອງທ່ານ. ອີງຕາມກົດໝາຍຂອງເມືອງ ແລະລັດ ທ່ານບໍ່ສາມາດປະຕິເສດການເຂົ້າມາກວດກາ ຢ່າງບໍ່ມີເຫດຜົນໄດ້.

### 2 ກະກຽມ

ແຈ້ງບອກໃຫ້ເຈົ້າຂອງ ຫຼືຜູ້ຈັດການຊັບສິນຮູ້ກ່ອນລ່ວງໜ້າກ່ຽວກັບສິ່ງຕ່າງໆທີ່ຈຳເປັນຕ້ອງມີການສ້ອມແປງແກ້ໄຂ.

ຮັບປະກັນວ່າ ຜູ້ກວດກາສາມາດເຂົ້າເຖິງທຸກພື້ນທີ່ໃນບ່ອນຢູ່ຂອງທ່ານ. ເກັບມ້ຽນສິ່ງຂອງສ່ວນຕົວຕ່າງໆທີ່ທ່ານບໍ່ຕ້ອງການໃຫ້ເຫັນ.

### 3 ເຂົ້າກວດກາ

ໃນມື້ກວດກາ, ຮັບປະກັນໃຫ້ຜູ້ກວດກາສາມາດເຂົ້າເຖິງບ່ອນຢູ່ຂອງທ່ານ.

ທ່ານສາມາດເລືອກທີ່ຈະຢູ່ຮ່ວມການກວດກາ ຫຼືບໍ່ຮ່ວມກໍ່ໄດ້.

### 4 ຕິດຕາມ

ເຈົ້າຂອງ ຫຼືຜູ້ຈັດການຊັບສິນຈະໄດ້ຮັບການແຈ້ງບອກກ່ຽວກັບຜົນການກວດກາ. ທ່ານສາມາດເບິ່ງວ່າຊັບສິນຜ່ານການກວດກາຫຼືບໍ່ຢູ່ທີ່ **www.seattle.gov/dpd**. ປ້ອນທີ່ຢູ່ຂອງທ່ານໃສ່ໃນການຄົ້ນຫາ “find Status and Activity” (ຊອກສະຖານະແລະກິດຈະກຳ).

ຖ້າມີບັນຫາເລື່ອງການກວດກາ, ຫຼືບັນຫາການບຳລຸງຮັກສາ ຫຼືຄວາມປອດໄພທີ່ພາດໄປ, ທ່ານສາມາດແຈ້ງບັນຫາດັ່ງກ່າວຫາເຈົ້າຂອງ ຫຼືຜູ້ຈັດການຊັບສິນ, ຫຼືທ່ານສາມາດໂທຫາໂຄງການ RRIO ທີ່ເບີ **(206) 684-4110**.

